

# ການແຕະເນື້ອຕ້ອງຕົວ
# ທີ່ເໝາະສົມ
# ແລະ ບໍ່ເໝາະສົມ


ໃນໝູ່ບ້ານແຫ່ງໜຶ່ງໄດ້ມີປະຊາຊົນອາໄສຢູ່. ໝູ່ບ້ານແຫ່ງນີ້
ເປັນໝູ່ບ້ານນ້ອຍທີ່ຢູ່ບໍ່ໄກຈາກຕົວເມືອງພໍເທົ່າໃດ.


ທຸກໆມື້ ສີທົນ ແລະ ນາລີ ໄດ້ຂີ່ລົດຖີບໄປຮັບ ບົວບານ ໄປໂຮງຮຽນ. ແຕ່ວ່າມື້ນີ້ ພວກເຂົາຕ້ອງຖ້າຢູ່ໜ້າບ້ານ ຈົນໃນທີ່ສຸດ ບົວບານ ອອກມາສວາຍກວ່າປົກກະຕິ.
“ເປັນຫຍັງຄືມາສວາຍແທ້ມື້ນີ້!”
“ໂອ໋ຍ! ຕີນລົດຖີບມັນຮົ່ວນະ. ຫາກໍແປງແລ້ວນີ້!”


ພໍໄປຮອດຫ້ອງຮຽນກໍເຫັນນາຍຄູກໍາລັງລໍຖ້າທັງສາມຄົນຢູ່
“ສະບາຍດີ ນາຍຄູ!”
“ສະບາຍດີ”


ໃນຫ້ອງຮຽນມື້ນີ້ ນັກຮຽນຈະໄດ້ຮຽນກ່ຽວກັບ
ສິ່ງທີ່ເດັກທຸກຄົນຄວນໄດ້ຮູ້ ແລ້ວ ນາຍຄູ
ກໍ່ຍົກແຜ່ນປ້າຍຂຶ້ນ.
ທຸກໆຄົນມີຄຸນຄ່າ
ຂອງໃຜລາວ
ນາລີ ໄດ້ລຸກຂຶ້ນພ້ອມກັບຍົກແຜ່ນປ້າຍ
ທີ່ມີຂໍ້ຄວາມວ່າ:
ຂ້ອຍມີສິດໃນການມີຊີວິດ
ທີ່ຢູ່ເຢັນເປັນສຸກ
ສ່ວນ ບົວບານ ກໍໄດ້ຍົກແຜ່ນປ້າຍ
ຂຶ້ນພ້ອມທັງມີເນື້ອໃນວ່າ:
ຮ່າງກາຍຂອງຂ້ອຍ
ບໍ່ແມ່ນກຳມະສິດຂອງຜູ້ອື່ນ
ແລະ ສີທົນ ກໍໄດ້ລຸກຂຶ້ນອີກ
ພ້ອມທັງຂໍ້ຄວາມທີ່ວ່າ:
ຖ້າຂ້ອຍມີບັນຫາ
ມີຄົນທີ່ຊ່ວຍຂ້ອຍໄດ້


ໃນຂະນະທີ່ ສີທົນ, ນາລີ ແລະ ບົວບານ ກຳລັງຂີ່ລົດຖີບ
ເມືອເຮືອນ ພວກເຂົາກໍໄດ້ພົບກັບ ທອງສາ
ເຊິ່ງເປັນຄົນໃນໝູ່ບ້ານດຽວກັນກັບທັງສາມ.
“ໂອ! ນັ້ນແມ່ນອ້າຍ ທອງສາ”
“ກຳລັງຈະເມືອເຮືອນບໍ?”
“ແມ່ນແລ້ວ!”
“ໂອ໋! ລົດອັນນີ້
ມັນຄືມາງາມພິລຶກແທ້!”
ມື້ໜຶ່ງ ທອງສາ ໄດ້ໄປເຮືອນຂອງ ສີທົນ
ແລ້ວຊວນລາວໄປຂີ່ລົດຫຼິ້ນ.



ມື້ຕໍ່ມາ ທອງສາ ໄດ້ມາເຮືອນຂອງ ບົວບານ ພ້ອມກັບລົດຖີບຄັນໃໝ່ ທີ່ລາວຊື້ມາໃຫ້ນາງ.
ແລ້ວ ທອງສາ ກໍໄດ້ຊວນ ບົວບານ ອອກໄປລອງຂີ່ລົດຖີບຄັນໃໝ່
ຫຼັງຈາກ ທອງສາ ເມືອແລ້ວ ນາລີ ກໍພົບເຫັນ ບົວບານ ຢູ່ຕາມທາງ ພ້ອມລົດຖີບຄັນໃໝ່ຂອງລາວ.
“ໂອ! ຊື້ລົດຖີບ ໃໝ່ຫວ໋າ? ງາມແທ້!”
“ແມ່ນແລ້ວ! ທອງສາ ຊື້ມາໃຫ້. ແຕ່ຂ້ອຍຮູ້ສຶກຢ້ານ ແລະ ບໍ່ດີໃຈເລີຍ.
“ເປັນຫຍັງ?!”
“ໃນຕອນທີ່ລາວ ພາຂ້ອຍລອງ ຂີ່ລົດຖີບ ລາວໄດ້ຈັບບາຍໂຕຂ້ອຍ ບ່ອນທີ່ບໍ່ເໝາະສົມ ແລະຂ້ອຍບໍ່ເຕັມໃຈໃຫ້ລາວເຮັດ.”


ໃນຂະນະທີ່ ບົວບານ ກັບ ນາລີ ລົມກັນຢູ່ນັ້ນ ສີທົນ ກໍຜ່ານມາໄດ້ຍິນພໍດີ
"ອ່າວ! ລາວກໍເຮັດແບບນັ້ນ ກັບຂ້ອຍຄືກັນ"


"ອຸ໋ຍ! ເປັນຕາຢ້ານແທ້!"


ແລ້ວທັງສາມກໍໄດ້ປຶກສາຫາລືກັນ ແລະຕົກລົງ ກັນວ່າຈະໄປບອກ ນາຍຄູ ຜູ້ທີ່ໄວ້ໃຈໄດ້


ທັງສາມ ໄດ້ອະທິບາຍເລື່ອງລາວຕ່າງໆໃຫ້ກັບ ນາຍຄູ ຟັງ ແລ້ວ ນາຍຄູ ກໍໄດ້ໂທຫາຕຳຫຼວດ
“ສະບາຍດີ! ນີ້ແມ່ນຫ້ອງການຕຳຫຼວດບໍ?”
“ເຈົ້າ! ຫ້ອງການຕຳຫຼວດ”


ເມື່ອຕຳຫຼວດຮູ້ກົກປາຍສາຍເຫດແລ້ວ ຈຶ່ງໄດ້ໄປຈັບ ທອງສາ
ໄປດຳເນີນຄະດີຕາມລະບຽບກົດໝາຍຂອງບ້ານເມືອງ.

## ຄຳຖາມສົນທະນາ

1. ເຈົ້າເຄີຍພົບກັບບັນຫາແບບນີ້ມາກ່ອນບໍ? ຖ້າເຈົ້າເຄີຍພົບ, ເຈົ້າໄດ້ເຮັດແນວໃດແດ່?
2. ຖ້າເຈົ້າເຫັນຄົນທີ່ກຳລັງພົບບັນຫາແບບນີ້ ເຈົ້າຈະຊ່ວຍເຂົາເຈົ້າແນວໃດແດ່?
3. ໃຫ້ເຈົ້າຈິ່ງນຳໃຊ້ນີ້ວມືທັງຫ້ານີ້ວ ເພື່ອຄິດຫາຜູ້ໃຫຍ່ຫ້າທ່ານ ທີ່ໄວ້ໃຈໄດ້ ເພື່ອຊ່ວຍເຈົ້າໃນເວລາທີ່ເກີດເລື່ອງແບບນີ້ຂຶ້ນ.

### ບໍ່ໄດ້!

ຖ້າໃຜຈັບບາຍຂ້ອຍ ໃນແບບທີ່ເຮັດໃຫ້ຂ້ອຍຮູ້ສຶກກັງວົນ, ຢ້ານກົວ ຫຼື ເຮັດໃຫ້ຂ້ອຍເຈັບ, ຂ້ອຍມີສິດທີ່ຈະປະຕິເສດ

### ໜີ!

ຖ້າຕົກຢູ່ໃນສະຖານະການກັງວົນ ຫຼື ຢ້ານກົວຂ້ອຍຄວນໜີຈາກສະຖານະການນັ້ນ

### ບອກ!

ຖ້າຂ້ອຍຮູ້ສຶກຢ້ານ ຫຼື ບໍ່ດີໃຈກ່ຽວກັບສະຖານະການໃດໜຶ່ງ ຂ້ອຍຄວນໄປບອກຜູ້ໃຫຍ່ທີ່ຂ້ອຍໄວ້ໃຈກ່ຽວກັບຄວາມກັງວົນຂອງຂ້ອຍ.

พຣະເຈົ້າກ່າວວ່າ,
“ເຮົາໄດ້ນຳໝູ່ເຈົ້າມາຈາກທີ່ສຸດປາຍແຜ່ນດິນ.
ເຮົາໄດ້ເອີ້ນໝູ່ເຈົ້າມາຈາກທີ່ສຸດທຸກມຸມໂລກ ແລະກ່າວວ່າ,
ໝູ່ເຈົ້າຄືຜູ້ຮັບໃຊ້ຂອງເຮົາ. ເຮົາບໍ່ເຄີຍປະຖິ້ມ
ແຕ່ເລືອກເອົາໝູ່ເຈົ້າໄວ້ ເພາະເຮົາຢູ່ກັບໝູ່ເຈົ້າ
ສະນັ້ນຢ່າສູ່ຢ້ານກົວ! ຢ່າສູ່ຢ້ານສິ່ງໃດໆ
ເຮົາຄື ພຣະເຈົ້າ ຂອງໝູ່ເຈົ້າ!
ເຮົາຈະຊ່ອຍຊູໃຫ້ໝູ່ເຈົ້າໄດ້ເຂັ້ມແຂງ
ເຮົາຈະປົກປັກຮັກສາ ແລະຊ່ອຍໝູ່ເຈົ້າໃຫ້ພົ້ນ.”

ເອຊາຢາ 41:9-10





© Alongsiders International
www.alongsiders.org
Email: info@alongsiders.org